ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນະຖາວອນ

ແຂວງໄຊສົມບູນ

ເລກທີ: 0304/ຈຂ.ຊບ
ໄຊສົມບູນ, ວັນທີ: 07.03.2024

# ຂໍ້ຕົກລົງ
# ວ່າດ້ວຍ ການກຳນົດລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງ ໂຄງການລົງທຶນຂອງລັດ ພາຍໃນແຂວງໄຊສົມບູນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV, ມາດຕາ 19,20, ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ ໂຄງສ້າງສູດຄິດໄລ່ລາຄາຫົວໜ່ວຍ ກິດ ຈະການກໍ່ສ້າງ ແລະ ສ້ອມແປງ ຂົວທາງ ຂອງລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 22943/ຍທຂ, ລົງວັນທີ 29 ສິງຫາ 2023;
- ອີງຕາມ ມະຕິ ກອງປະຊຸມ ສະພາປະຊາຊົນ ແຂວງໄຊສົມບູນ ວ່າດ້ວຍ ການຮັບຮອງ ຂໍ້ຕົກລົງຂອງທ່ານເຈົ້າແຂວງໄຊສົມບູນ ວ່າດ້ວຍ ການກຳນົດລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງໂຄງການລົງທຶນຂອງລັດ ພາຍໃນແຂວງ ໄຊສົມບູນ, ສະບັບເລກທີ 0075/ສພຂ.ຊບ, ລົງວັນທີ 05 ມີນາ 2024.
- ອີງຕາມ ໜັງສືສະເໜີ ຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງໄຊສົມບູນ, ສະບັບເລກທີ 552/ຍທຂ.ຊບ ລົງວັນທີ 06 ມີນາ 2024.

## ເຈົ້າແຂວງໄຊສົມບູນ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບ ແລະ ມາດຕະການ ກ່ຽວກັບ ການນຳໃຊ້ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງ ໂຄງການລົງທຶນຂອງລັດ ພາຍໃນແຂວງໄຊສົມບູນທີ່ຈະນຳໃຊ້ເຂົ້າບັນດາໂຄງການລົງທຶນຂອງລັດ ຢູ່ແຂວງໄຊສົມບູນ, ແນໃສ່ເຮັດໃຫ້ບັນດາໂຄງການລົງທຶນຂອງລັດນັ້ນ ໄດ້ຮັບການພັດທະນາທີ່ມີຄຸນນະພາບ, ຍືນຍົງ, ຕາມຄາດໝາຍທີ່ວາງໄວ້ ແລະ ສອດຄ່ອງກັບສະພາບເສດຖະກິດ.

**ມາດຕາ 2 ນິຍາມ**

ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງ ໂຄງການລົງທຶນຂອງລັດ ພາຍໃນແຂວງໄຊສົມບູນ ແມ່ນ ລາຄາທີ່ໄດ້ມາຈາກການເອົາລາຄາວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄປປ້ອນໃສ່ໂຄງສ້າງສູດຄິດໄລ່ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວທາງ ສະບັບຮຽບຮຽງ ປີ 2023 ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ, ເພື່ອມານຳໃຊ້ຄິດໄລ່ລາຄາ ແລະ ມູນຄ່າໂຄງການໃນວຽກງານກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວທາງ ພາຍໃນແຂວງໄຊສົມບູນ.

**ມາດຕາ 3 ນະໂຍບາຍຂອງລັດ**

- ລັດຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະ ເທດ

ປະກອບສ່ວນສະຕິປັນຍາ, ກຳລັງແຮງ, ທຶນຮອນ ແລະ ເຕັກນິກວິຊາການເຂົ້າໃນວຽກງານກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຢ່າງທົ່ວເຖິງເພື່ອຕອບສະໜອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງ ແຂວງ / ເມືອງ.

- ລັດປະກອບສ່ວນທາງດ້ານບຸກຄະລາກອນ, ງົບປະມານ ແລະ ພາຫະນະອຸປະກອນເຂົ້າໃນວຽກງານກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຕາມຄວາມເໝາະສົມ.

**ມາດຕາ 4 ຫຼັກການ ກ່ຽວກັບ ການນຳໃຊ້ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງ ໂຄງການລົງທຶນຂອງລັດ ພາຍໃນແຂວງໄຊສົມບູນ**

ຫຼັກການພື້ນຖານ ກ່ຽວກັບ ການນຳໃຊ້ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງ ໂຄງການລົງທຶນຂອງລັດ ພາຍໃນແຂວງໄຊສົມບູນ ມີດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງ ຄົມ ຂອງແຂວງ / ເມືອງ ໃຫ້ຖືກຕ້ອງຕາມກົດໝາຍ;
2. ຮັບປະກັນໃຫ້ມີຜົນປະໂຫຍດຕໍ່ລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ;
3. ມີການປະສານ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງສັງຄົມຢ່າງກວ້າງ ຂວາງ;
4. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະເຂົ້າໃນການຄິດໄລ່ປະເມີນມູນຄ່າການກໍ່ສ້າງໂຄງການລົງທຶນຂອງລັດ ຂອງ ຂະແໜງ ໂຍທາທິການ ແລະ ຂົນສົ່ງ ໃນຂອບເຂດທົ່ວແຂວງໄຊສົມບູນ ເທົ່ານັ້ນ.

## ໝວດທີ 2
## ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ

**ມາດຕາ 6 ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ**

**ບົດ-200 ວຽກດິນ (Earth Works)**

| ນ້ຳເບີບົດ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| **200** | **ວຽກດິນ** | | |
| **201** | **ວຽກບຸກເບີກສະໜາມ** | | |
| 201-1 | ບຸກເບີກ, ດູດລອກໜ້າທຳມະຊາດ ຄວາມໜາ 150ມມ ລວມທັງຂົນໄປເກັບມ້ຽນ | $ມ^2$ | 7,323 |
| 201-2 | ຕັດຕົ້ນໄມ້ທີ່ມີເສັ້ນຜ່າສູນກາງ > 300ມມ ລວມທັງຂົນໄປເກັບມ້ຽນ | ຕົ້ນ | 324,214 |
| 201-3 | ຂຸດຮື້ໜ້າທາງປູຢາງເກົ່າ ຄວາມໜາ 150ມມ ພ້ອມອັດແໜ້ນດິນ | $ມ^2$ | 12,438 |
| 201-4 | ຂຸດຮື້ໜ້າທາງຢາງຍື້ອເກົ່າ ຄວາມໜາ 50-100ມມ ແລະ ປັບໜ້າຊັ້ນພື້ນທາງເກົ່າພ້ອມອັດແໜ້ນດິນ | $ມ^2$ | 15,063 |
| **202** | **ຍົກຍ້າຍ-ທັບມ້າງ-ຂຸດຮື້** | | |
| 202-1 | ມ້າງໂຄງສ້າງເບຕົງ | $ມ^3$ | 425,019 |
| 202-2 | ຮື້ຖອນທໍ່ກົມລະບາຍນ້ຳເກົ່າ ຂະໜາດ Ø800ມມ ລວມທັງຂົນໄປເກັບມ້ຽນ | ມຍ | 292,300 |
| 202-3 | ຮື້ຖອນທໍ່ກົມລະບາຍນ້ຳເກົ່າ ຂະໜາດ Ø1000ມມ ລວມທັງຂົນໄປເກັບມ້ຽນ | ມຍ | 319,231 |
| 202-4 | ຮື້ຖອນທໍ່ກົມລະບາຍນ້ຳເກົ່າ ຂະໜາດ Ø1200ມມ ລວມທັງຂົນໄປເກັບມ້ຽນ | ມຍ | 340,776 |
| 202-5 | ຮື້ຖອນທໍ່ກົມລະບາຍນ້ຳເກົ່າ ຂະໜາດ Ø1500ມມ ລວມທັງຂົນໄປເກັບມ້ຽນ | ມຍ | 426,955 |
| 202-6 | ທັບມ້າງໂຄງສ້າງຫີນກໍ່ ລວມທັງຂົນໄປເກັບມ້ຽນ | $ມ^3$ | 322,056 |
| **203** | **ວຽກດິນຕັດ** | | |
| 203-1 | ຂຸດດິນທຳມະດາ ລວມທັງຂົນໄປເກັບມ້ຽນ | $ມ^3$ | 33,742 |

| ນໍາເບີບິນ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| 203-2 | ຂຸດຫີນ, ຊີເຈາະຫີນ ແລະ ລະເບີດຫີນ ລວມທັງຂົນໄປເກັບມ້ຽນ | ມ$^3$ | 258,150 |
| 203-3 | ຂຸດຮ່ອງນໍ້າ ລວມທັງຂົນໄປເກັບມ້ຽນ | ມ$^3$ | 37,727 |
| 203-4 | ຂຸດວັດສະດຸບໍ່ເໝາະສົມ ລວມທັງຂົນໄປເກັບມ້ຽນ | ມ$^3$ | 76,515 |
| 203-5 | ຂຸດວັດສະດຸບໍ່ເໝາະສົມ ລວມທັງຖົມຄືນດ້ວຍດິນຈາກບໍ່ CBR ≥ 4% | ມ$^3$ | 164,924 |
| 203-6 | ຂຸດ ຫລື ຕັກວັດສະດຸເຈື່ອນ ອອກຈາກຮ່ອງນໍ້າ ແລະ ໜ້າທາງລວມທັງຂົນໄປເກັບມ້ຽນ | ມ$^3$ | 24,718 |
| **204** | **ວຽກດິນຖົມ** | | |
| 204-1 | ຖົມຊັ້ນຍົກລະດັບດ້ວຍວັດສະດຸຈາກດິນຕັດ | ມ$^3$ | 72,736 |
| 204-2 | ຖົມຊັ້ນຍົກລະດັບດ້ວຍວັດສະດຸຈາກດິນຈາກບໍ່ | ມ$^3$ | 88,408 |
| 204-3 | ຖົມຊັ້ນຍົກລະດັບດ້ວຍວັດສະດຸຄັດເລືອກ | ມ$^3$ | 91,784 |
| 204-4 | ຖົມຊັ້ນຍົກລະດັບດ້ວຍວັດສະດຸຊາຍ | ມ$^3$ | 405,419 |
| 204-5 | ຖົມຊັ້ນຍົກລະດັບດ້ວຍຫີນພູ/ຫີນແຮ່ ປະສົມຊາຍ | ມ$^3$ | 257,161 |
| 204-6 | ຖົມຫີນພູ ຂະໜາດ ≤ 350ມມ | ມ$^3$ | 588,071 |
| 204-7 | ຖົມຊາຍທົດນໍ້າ ຕໍາແໜ້ນຮອງພື້ນໂຄງສ້າງດ້ວຍແຮງງານຄົນ | ມ$^3$ | 447,651 |
| **205** | **ວຽກຂຸດດິນ-ຫີນ ເພື່ອເຮັດໂຄງສ້າງ** | | |
| 205-1 | ຂຸດດິນເພື່ອເຮັດໂຄງສ້າງ ລວມທັງຂົນໄປເກັບມ້ຽນ | ມ$^3$ | 53,483 |
| 205-2 | ຂຸດຫີນເພື່ອເຮັດໂຄງສ້າງ ລວມທັງຂົນໄປເກັບມ້ຽນ | ມ$^3$ | 260,080 |
| 205-3 | ຂຸດດິນໃຕ້ນໍ້າເພື່ອເຮັດໂຄງສ້າງ ລວມທັງຂົນໄປເກັບມ້ຽນ | ມ$^3$ | 69,123 |
| 205-4 | ຂຸດຫີນໃຕ້ນໍ້າເພື່ອເຮັດໂຄງສ້າງ ລວມທັງຂົນໄປເກັບມ້ຽນ | ມ$^3$ | 273,324 |

**ບົດ-300 ວຽກໂຄງສ້າງທາງ (Pavement Works)**

| ນໍາເບີບິນ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| **300** | **ວຽກໂຄງສ້າງໜ້າທາງ, ທາງຄົນຍ່າງ ແລະ ບ່າທາງ** | | |
| **301** | **ວຽກກໍ່ສ້າງຊັ້ນຮອງພື້ນທາງ** | | |
| 301-1 | ຊັ້ນຮອງພື້ນທາງດ້ວຍວັດສະດຸຈາກບໍ່ (CBR≥ 25%) | ມ$^3$ | 101,806 |
| 301-2 | ຊັ້ນຮອງພື້ນທາງດ້ວຍວັດສະດຸຈາກບໍ່ປະສົມຫີນແຮ່ (CBR ≥ 30%) (GWC) | ມ$^3$ | 264,142 |
| 301-3 | ຊັ້ນຮອງພື້ນທາງດ້ວຍວັດສະດຸຈາກບໍ່ປະສົມຫີນຂົບ (CBR ≥ 30%) | ມ$^3$ | 296,644 |
| **302** | **ວຽກກໍ່ສ້າງຊັ້ນພື້ນທາງ** | | |
| 302-1 | ຊັ້ນພື້ນທາງດ້ວຍຫີນພູຂົບ | ມ$^3$ | 440,371 |
| 302-2 | ຊັ້ນພື້ນທາງດ້ວຍຫີນພູຂົບປະສົມຊີມັງ | ມ$^3$ | 690,739 |
| **303** | **ຊັ້ນຢາງກັນຊຶມ ແລະ ເກາະຕິດ** | | |
| 303-1 | ສີດຢາງກັນຊຶມ Prime Coat (MC70) | ລິດ | 36,345 |
| 303-2 | ສີດຢາງ Seal Coat (AC 80/100) | ລິດ | 34,838 |
| 303-3 | ສີດຢາງ Tack Coat (CRS2) | ລິດ | 29,946 |
| **304** | **ປູແຮ່ ໜ້າທາງ** | | |
| 304-1 | ຢາຍແຮ່ ຊັ້ນທີ 1 | ມ$^3$ | 744,806 |

| ນໍາເບີບິນ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| 304-2 | ຢາຍແຮ່ ຊັ້ນທີ 2 | ມ$^3$ | 765,442 |
| **305** | **ໜ້າທາງປູຢາງຂໍ້** | | |
| 305-1 | ວຽກປູຢາງຂໍ້ຊັ້ນ Binder Course | ມ$^3$ | 4,201,752 |
| 305-2 | ວຽກປູຢາງຂໍ້ຊັ້ນ Wearing Course | ມ$^3$ | 4,435,286 |
| **306** | **ໜ້າທາງປູດ້ວຍເບຕົງເສີມເຫຼັກ (ເບຕົງ C30)** | | |
| 306-1 | ໜ້າທາງປູດ້ວຍເບຕົງເສີມເຫຼັກ ໜາ 23 ຊມ | ມ$^2$ | 1,033,174 |
| 306-2 | ໜ້າທາງປູດ້ວຍເບຕົງເສີມເຫຼັກ ໜາ 25 ຊມ | ມ$^2$ | 1,103,095 |
| **307** | **ປູກ້ອນເບຕົງທາງຍ່າງ, ດອນກາງທາງ** | | |
| 307-1 | ເບຕົງ C15 ຄວາມໜາ 5 ຊມ | ມ$^2$ | 140,409 |
| 307-2 | ປູກ້ອນເບຕົງບໍ່ມີສີ | ມ$^2$ | 117,129 |
| 307-3 | ປູກ້ອນເບຕົງສີ | ມ$^2$ | 158,050 |
| **308** | **ສະໜອງ ແລະ ຕິດຕັ້ງເບຕົງຂອບທາງ:** | | |
| 308-1 | ເບຕົງຂອບທາງດ້ານໜ້າ ເບຕົງ C20 | ມຍ | 254,085 |
| 308-2 | ເບຕົງຂອບທາງດອນກາງ ເບຕົງ C20 | ມຍ | 274,363 |
| 308-3 | ເບຕົງຂອບທາງເບື້ອງຫຼັງທາງຍ່າງ ເບຕົງ C20 | ມຍ | 98,290 |

**ບົດ-400 ວຽກລະບົບລະບາຍນໍ້າ ແລະ ປ້ອງກັນເຈື່ອນ (Drainage Works)**

| ນໍາເບີບົດ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| **400** | **ວຽກລະບາຍນໍ້າ ແລະ ປ້ອງກັນເຈື່ອນ** | | |
| **401** | **ວຽກກໍ່ສ້າງທໍ່ລ່ຽມເບຕົງເສີມເຫລັກ** | | |
| 401-1 | ເບຕົງ C10 | ມ$^3$ | 1,480,399 |
| 401-2 | ເບຕົງ C25 | ມ$^3$ | 2,860,313 |
| 401-3 | ເຫລັກເສີມສໍາລັບທໍ່ລ່ຽມ ແລະ ຝາປົກທໍ່ | ໂຕນ | 20,537,157 |
| **402** | **ວຽກກໍ່ສ້າງທໍ່ກົມເບຕົງເສີມເຫລັກ** | | |
| 402-1 | ຕິດຕັ້ງທໍ່ກົມຂະໜາດ Ø300ມມ | ມ | 382,546 |
| 402-2 | ຕິດຕັ້ງທໍ່ກົມຂະໜາດ Ø400ມມ | ມ | 535,609 |
| 402-3 | ຕິດຕັ້ງທໍ່ກົມຂະໜາດ Ø500ມມ | ມ | 759,404 |
| 402-4 | ຕິດຕັ້ງທໍ່ກົມຂະໜາດ Ø600ມມ | ມ | 965,969 |
| 402-5 | ຕິດຕັ້ງທໍ່ກົມຂະໜາດ Ø800ມມ | ມ | 1,623,684 |
| 402-6 | ຕິດຕັ້ງທໍ່ກົມຂະໜາດ Ø1000ມມ | ມ | 2,303,899 |
| 402-7 | ຕິດຕັ້ງທໍ່ກົມຂະໜາດ Ø1200ມມ | ມ | 3,185,032 |
| 402-8 | ຕິດຕັ້ງທໍ່ກົມຂະໜາດ Ø1500ມມ | ມ | 4,876,508 |
| 403 | **ວຽກຜະລິດເບຕົງ ແລະ ເຫລັກເສີມ** | | |
| 403-1 | ເບຕົງ C10 | ມ$^3$ | 1,470,957 |
| 403-2 | ເບຕົງ C20 | ມ$^3$ | 1,616,664 |
| 403-3 | ເບຕົງ C25 | ມ$^3$ | 2,599,975 |

| ນໍາເບີບິນ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| 403-4 | ເບຕົງ C30 | ມ3 | 2,795,183 |
| 403-5 | ເຫລັກເສີມແຮງ (RB-SR24, DB-SD40) | ໂຕນ | 19,730,939 |
| **404** | **ການກໍ່ສ້າງຮ່ອງນ້ຳແຄມທາງ** | | |
| 404-1 | ກໍ່ສ້າງຮ່ອງນ້ຳດ້ວຍຫີນພູອັດປະທາຍ (Ditch Lining) | ມ$^3$ | 1,552,072 |
| 404-2 | ກໍ່ສ້າງຮ່ອງນ້ຳດ້ວຍແຜ່ນເບຕົງ C20 ຄວາມໜາ 7ຊມ | ມ$^2$ | 106,747 |
| 404-3 | ກໍ່ສ້າງຮ່ອງນ້ຳດ້ວຍເບຕົງ C25 ລວມທັງເຫລັກເສີມ ຄວາມໜາ 7ຊມ | ມ$^2$ | 218,427 |
| **405** | **ວຽກກໍ່ສ້າງຂຸມຮັບນ້ຳ** | | |
| 405-1 | **ກໍ່ສ້າງຂຸມຮັບນ້ຳຈາກໜ້າທາງ** | | |
| 405-1.1 | ກໍ່ສ້າງຂຸມຮັບນ້ຳຈາກໜ້າທາງ ຝາປິດເຮັດດ້ວຍຂາງ | ໜ່ວຍ | 4,766,844 |
| 405-1.2 | ກໍ່ສ້າງຂຸມຮັບນ້ຳຈາກໜ້າທາງ ຝາປິດເຮັດດ້ວຍເຫລັກເຄືອບ Galvanized | ໜ່ວຍ | 4,310,362 |
| 405-1.3 | ກໍ່ສ້າງຂຸມຮັບນ້ຳຕົກຈາກຄົວເຮືອນ | ໜ່ວຍ | 3,725,485 |
| **406** | **ກໍ່ສ້າງຂຸມນ້ຳຕົກ (Manhole)** | | |
| **406.1** | **ກໍ່ສ້າງຂຸມນ້ຳຕົກ 2ຕາ (Manhole)** | | |
| 406.1-1 | ກໍ່ສ້າງຂຸມນ້ຳຕົກ 2ຕາ ຂະໜາດທໍ່ Ø800ມມ | ໜ່ວຍ | 10,199,412 |
| 406.1-2 | ກໍ່ສ້າງຂຸມນ້ຳຕົກ 2ຕາ ຂະໜາດທໍ່ Ø1000ມມ | ໜ່ວຍ | 13,612,836 |
| 406.1-3 | ກໍ່ສ້າງຂຸມນ້ຳຕົກ 2ຕາ ຂະໜາດທໍ່ Ø1200ມມ | ໜ່ວຍ | 18,876,817 |
| **406.2** | **ກໍ່ສ້າງຂຸມນ້ຳຕົກ 3ຕາ (Manhole)** | | |
| 406.2-1 | ກໍ່ສ້າງຂຸມນ້ຳຕົກ 3ຕາ ຂະໜາດທໍ່ Ø800ມມ | ໜ່ວຍ | 9,968,098 |
| 406.2-2 | ກໍ່ສ້າງຂຸມນ້ຳຕົກ 3ຕາ ຂະໜາດທໍ່ Ø1000ມມ | ໜ່ວຍ | 13,186,184 |
| 406.2-3 | ກໍ່ສ້າງຂຸມນ້ຳຕົກ 3ຕາ ຂະໜາດທໍ່ Ø1200ມມ | ໜ່ວຍ | 18,214,985 |
| **406.3** | **ກໍ່ສ້າງຂຸມນ້ຳຕົກ 4ຕາ (Manhole)** | | |
| 406.3-1 | ກໍ່ສ້າງຂຸມນ້ຳຕົກ 4ຕາ ຂະໜາດທໍ່ Ø800ມມ | ໜ່ວຍ | 9,678,006 |
| 406.3-2 | ກໍ່ສ້າງຂຸມນ້ຳຕົກ 4ຕາ ຂະໜາດທໍ່ Ø1000ມມ | ໜ່ວຍ | 12,686,922 |
| 406.3-3 | ກໍ່ສ້າງຂຸມນ້ຳຕົກ 4ຕາ ຂະໜາດທໍ່ Ø1200ມມ | ໜ່ວຍ | 17,380,082 |
| **407** | **ກໍ່ສ້າງ ແລະ ຕິດຕັ້ງຝາປິດຂຸມນ້ຳຕົກ (Manhole Cover)** | | |
| 407-1 | ຈັດຫາ ແລະ ຕິດຕັ້ງຝາປິດຂຸມນ້ຳຕົກ (Manhole Cover) ຮັບນ້ຳໜັກໄດ້ 12 ໂຕນ | ອັນ | 7,680,779 |
| 407-2 | ຈັດຫາ ແລະ ຕິດຕັ້ງຝາປິດຂຸມນ້ຳຕົກ (Manhole Cover) ຮັບນ້ຳໜັກໄດ້ 25 ໂຕນ | ອັນ | 9,973,819 |
| **408** | **ກະຕ່າເຫຼັກ ປ້ອງກັນເຈື່ອນ** | | |
| 408-1 | ວາງຫີນໃສ່ກະຕ່າເຫຼັກ (Box Gabion) | ມ$^3$ | 1,298,865 |
| 408-2 | ວາງຫີນໃສ່ກະຕ່າເຫຼັກ (Reno Mestress, ໜາ 30 ຊມ) | ມ$^3$ | 1,541,362 |
| 408-3 | ວາງແຜ່ນໃຍສັງເຄາະ (Geo textile) | ມ$^2$ | 47,934 |
| **409** | **ວຽກປ້ອງກັນເຈື່ອນດ້ວຍການກໍ່ຫີນພູ** | | |
| 409-1 | ປ້ອງກັນເຈື່ອນດ້ວຍການວາງຫີນພູ (Loose Riprap) | ມ$^3$ | 715,030 |
| 409-2 | ປ້ອງກັນເຈື່ອນດ້ວຍການວາງຫີນພູ ແລະ ອັດປະທາຍ (Grouted Riprap) | ມ$^3$ | 1,607,654 |
| 409-3 | ປ້ອງກັນເຈື່ອນດ້ວຍການກໍ່ຫີນພູ (Stone Masonry) | ມ$^3$ | 1,126,457 |
| 409-4 | ຖົມຫີນໃຫຍ່ ປາກນ້ຳເຂົ້າ - ອອກ | ມ$^3$ | 537,697 |
| **410** | **ວຽກປ້ອງກັນເຈື່ອນດ້ວຍການປູກຫຍ້າ** | | |
| 410-1 | ຖົມດິນປູກຝັງ | ມ$^3$ | 49,276 |
| 410-2 | ປູກຫຍ້າ ແບບຕາຜ້າ (Block Sodding) | ມ$^2$ | 19,358 |

## ບົດ-500 ວຽກກໍ່ສ້າງຂົວ (Bridge Works)

| ນໍ້າເບີບົດ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| **500** | **ວຽກກໍ່ສ້າງໂຄງສ້າງຂົວ** | | |
| **501** | **ວຽກທັບມ້າງໂຄງສ້າງ** | | |
| 501-1 | ມ້າງຂົວເບເລ, ບີໄຊ້ (ວຽງຈັນ) | ໂຕນ | 1,165,996 |
| 501-2 | ມ້າງຂົວເບເລ, ບີໄຊ້ (ຫົວພັນ) | ໂຕນ | 1,387,536 |
| 501-3 | ມ້າງຂົວເບເລ, ບີໄຊ້ (ເຊກອງ) | ໂຕນ | 1,317,576 |
| 202-1 | ມ້າງໂຄງສ້າງເບຕົງຂົວເກົ່າ | ມ$^3$ | 425,019 |
| **502** | **ວຽກຜະລິດ ແລະ ຕອກເຂັມລວມທັງການທົດສອບ** | | |
| 502-1 | ເຂັມເບຕົງເສີມເຫຼັກ (350ມມ x 350ມມ) ເບຕົງ C35 | ມ | 1,597,121 |
| 502-2 | ເຂັມເບຕົງເສີມເຫຼັກ (400ມມ x 400ມມ) ເບຕົງ C35 | ມ | 2,120,864 |
| **503** | **ວຽກກໍ່ສ້າງເສົາເຂັມເຈາະ ລວມທັງການທົດສອບ** | | |
| 503-1 | ກໍ່ສ້າງເສົາເຂັມເຈາະ Ø1000ມມ ເບຕົງ C30 | ມ | 7,924,428 |
| 503-2 | ກໍ່ສ້າງເສົາເຂັມເຈາະ Ø1200ມມ ເບຕົງ C30 | ມ | 9,158,045 |
| 503-3 | ກໍ່ສ້າງເສົາເຂັມເຈາະ Ø1500ມມ ເບຕົງ C30 | ມ | 11,883,989 |
| 503-4 | ເຫລັກເສີມແຮງ (RB-SR24, DB-SD40, DB-SD60) | ໂຕນ | 21,806,288 |
| **504** | **ວຽກເບຕົງ** | | |
| 504-1 | ເບຕົງກັນເປື້ອນ C10 | ມ$^3$ | 2,079,797 |
| 504-2 | ເບຕົງສໍາລັບພາກສ່ວນລຸ່ມຂອງຂົວ C25 | ມ$^3$ | 3,172,226 |
| 504-3 | ເບຕົງສໍາລັບພາກສ່ວນເທິງຂອງຂົວ C30 | ມ$^3$ | 3,542,714 |
| 504-4 | ເບຕົງສໍາລັບພາກສ່ວນເທິງຂອງຂົວ C35 | ມ$^3$ | 3,724,439 |
| 504-5 | ເບຕົງສໍາລັບຂາງອັດແຮງຂອງຂົວ C40 | ມ$^3$ | 6,497,586 |
| **505** | **ວຽກເຫຼັກເສີມ ຂົວ** | | |
| 505-1 | ເຫຼັກເສີມໂຄງສ້າງສ່ວນລຸ່ມ | ໂຕນ | 21,912,355 |
| 505-2 | ເຫຼັກເສີມໂຄງສ້າງສ່ວນເທິງ | ໂຕນ | 25,464,161 |
| 505-3 | ສາຍກາບ, ຫົດຍຶດສາຍກາບ ແລະ ວັດຖຸປະກອບ | ໂຕນ | 64,181,519 |
| **506** | **ວຽກຕິດຕັ້ງຂາງຂົວຮູບໂຕ I** | | |
| 506-1 | ຕິດຕັ້ງຂາງຂົວຍາວ 25ແມັດ (ນໍ້າໜັກ 44.36 ໂຕນ) | ຂາງ | 43,591,871 |
| 506-2 | ຕິດຕັ້ງຂາງຂົວຍາວ 30ແມັດ ( ນໍ້າໜັກ 58.37 ໂຕນ) | ຂາງ | 57,356,819 |
| 506-3 | ຕິດຕັ້ງຂາງຂົວຍາວ 33ແມັດ (ນໍ້າໜັກ 63.51 ໂຕນ) | ຂາງ | 62,410,273 |
| 506-4 | ຕິດຕັ້ງຂາງຂົວຍາວ 16.60ແມັດ (ນໍ້າໜັກ 9.4 ໂຕນ) | ຂາງ | 5,585,538 |
| 506-5 | ຕິດຕັ້ງຂາງຂົວຍາວ 19.60ແມັດ (ນໍ້າໜັກ 11.75 ໂຕນ) | ຂາງ | 6,981,923 |
| 506-6 | ຕິດຕັ້ງຂາງຂົວຍາວ 22.60ແມັດ (ນໍ້າໜັກ 14.1 ໂຕນ) | ຂາງ | 8,378,307 |
| 506-7 | ຕິດຕັ້ງຂາງຂົວຍາວ 25.60ແມັດ (ນໍ້າໜັກ 20 ໂຕນ) | ຂາງ | 11,872,240 |
| **507** | **ວຽກຊິ້ນສ່ວນປະກອບຂອງຂົວ** | | |
| 507-1.1 | ໝອນຂົວ Elastomeric Bearing 400x400x67 CR | ຊຸດ | 5,526,649 |
| 507-1.2 | ໝອນຂົວ Elastomeric Bearing 300x400x41 CR | ຊຸດ | 5,366,973 |

| ນໍາເບີບິນ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| 507-1.3 | ໝອນຂົວ Elastomeric Bearing 400x280x46 Advance Polymer | ຊຸດ | 1,405,090 |
| 507-2 | ກໍ່ສ້າງຊ່ອງຫົດຍືດ ແບບ Expansion Joint SSFB 80B | ມຍ | 7,945,529 |
| 507-3 | ກໍ່ສ້າງຊ່ອງຫົດຍືດ ແບບ Expansion Joint SSFB 50A | ມຍ | 5,926,695 |
| 507-4 | ກໍ່ສ້າງຊ່ອງຫົດຍືດ ແບບ Expansion Joint SSFB CD60 | ມຍ | 697,234 |
| 507-5 | ຮາວພະນັກຂົວ | ມຍ | 519,257 |
| **508** | **ວຽກການທົດສອບຂົວ** | ມຍ | |
| 508-1 | ວຽກການກວດກາເຂັມເສົາຂົວ Sonic test | ມຍ | 655,379 |
| 508-2 | ວຽກການກວດກາເຂັມເສົາຂົວ Dynamic test | ເຂັມ | 9,732,378 |
| 508-3 | ວຽກການກວດກາເຂັມເສົາຂົວ Sonic test | ແຫ່ງ | 85,821,875 |
| 508-2 | **ວຽກການກວດກາເຂັມເສົາຂົວ Dynamic test** | | |
| 509-1 | ຊິ້ນສ່ວນຂົວເຫຼັກ ປະເພດ SS (Compact -200 ຈາກຈີນ) ວຽງຈັນ | ມຍ | 69,192,715 |
| 509-2 | ຊິ້ນສ່ວນຂົວເຫຼັກ ປະເພດ DS (Compact -200 ຈາກຈີນ) ວຽງຈັນ | ມຍ | 76,929,161 |
| 509-3 | ຊິ້ນສ່ວນຂົວເຫຼັກ ປະເພດ TS (Compact -200 ຈາກຈີນ) ວຽງຈັນ | ມຍ | 98,853,578 |
| 509-1 | ຊິ້ນສ່ວນຂົວເຫຼັກ ປະເພດ SS (Compact -200 ຈາກຈີນ) ຫົວພັນ | ມຍ | 69,075,737 |
| 509-2 | ຊິ້ນສ່ວນຂົວເຫຼັກ ປະເພດ DS (Compact -200 ຈາກຈີນ) ຫົວພັນ | ມຍ | 76,789,901 |
| 509-3 | ຊິ້ນສ່ວນຂົວເຫຼັກ ປະເພດ TS (Compact -200 ຈາກຈີນ) ຫົວພັນ | ມຍ | 98,676,439 |
| 509-1 | ຊິ້ນສ່ວນຂົວເຫຼັກ ປະເພດ SS (Compact -200 ຈາກຈີນ) ເຊກອງ | ມຍ | 69,813,332 |
| 509-2 | ຊິ້ນສ່ວນຂົວເຫຼັກ ປະເພດ DS (Compact -200 ຈາກຈີນ) ເຊກອງ | ມຍ | 77,667,991 |
| 509-3 | ຊິ້ນສ່ວນຂົວເຫຼັກ ປະເພດ TS (Compact -200 ຈາກຈີນ) ເຊກອງ | ມຍ | 99,793,370 |

**ບົນ-600 ວຽກອື່ງປະກອບອື່ນໆ (Meacellenous)**

| ນໍາເບີບິນ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| **601** | **ແຕ້ມເສັ້ນຈາລະຈອນ** | | |
| 601-1 | ແຕ້ມເສັ້ນແບ່ງຊ່ອງຈາລະຈອນດ້ວຍສີທຳມະດາມີຝຸ່ນແກ້ວສະທ້ອນແສງ | $ມ^2$ | 287,315 |
| 601-2 | ແຕ້ມເສັ້ນແບ່ງຊ່ອງຈາລະຈອນດ້ວຍ ເທີໂມປລາສະຕິກມີຝຸ່ນແກ້ວສະທ້ອນແສງ | $ມ^2$ | 690,651 |
| 601-3 | ຄື້ນລູກລະນາດ | $ມ^2$ | 1,696,595 |
| 601-4 | ທາສີຂອບທາງ | $ມ^2$ | 32,061 |
| **602** | **ປ້າຍສັນຍາຈະລາຈອນ** | | |
| **602-1** | **ການຕິດຕັ້ງປ້າຍຈະລາຈອນປະເພດ 3 ລ່ຽມ** | | |
| 602-1.1 | ການຕິດຕັ້ງປ້າຍຈາລະຈອນ 3ລ່ຽມ (ຂະໜາດ 60 x 60ຊມ) | ຊຸດ | 3,538,321 |
| 602-1.2 | ການຕິດຕັ້ງປ້າຍຈາລະຈອນ 3ລ່ຽມ (ຂະໜາດ 75 x 75ຊມ) | ຊຸດ | 4,147,092 |
| 602-1.3 | ການຕິດຕັ້ງປ້າຍຈາລະຈອນ 3ລ່ຽມ (ຂະໜາດ 90 x 90ຊມ) | ຊຸດ | 4,727,200 |
| **602-2** | **ການຕິດຕັ້ງປ້າຍຈະລາຈອນປະເພດ ອົງມົນ** | | |
| 602-2.1 | ການຕິດຕັ້ງປ້າຍຈາລະຈອນອົງມົນ (ຂະໜາດ 60 x 60ຊມ) | ຊຸດ | 3,638,006 |
| 602-2.2 | ການຕິດຕັ້ງປ້າຍຈາລະຈອນອົງມົນ (ຂະໜາດ 75 x 75ຊມ) | ຊຸດ | 4,218,114 |
| 602-2.3 | ການຕິດຕັ້ງປ້າຍຈາລະຈອນອົງມົນ (ຂະໜາດ 90 x 90ຊມ) | ຊຸດ | 4,799,493 |
| **602-3** | **ການຕິດຕັ້ງປ້າຍຈະລາຈອນປະເພດ 8 ລ່ຽມ** | | |
| 602-3.1 | ການຕິດຕັ້ງປ້າຍຈາລະຈອນ 8ລ່ຽມ ຂະໜາດ (60 x 60ຊມ) | ຊຸດ | 3,638,006 |
| 602-3.2 | ການຕິດຕັ້ງປ້າຍຈາລະຈອນ 8ລ່ຽມ ຂະໜາດ (75 x 75ຊມ) | ຊຸດ | 4,218,114 |

| ນໍາເບີບິນ | ລາຍການໜ້າວຽກ | ຫົວໜ່ວຍ | ລາຄາຫົວໜ່ວຍ (ກີບ) |
|---|---|---|---|
| 602-3.3 | ການຕິດຕັ້ງປ້າຍຈາລະຈອນ 8ລ່ຽມ ຂະໜາດ (90 x 90ຊມ) | ຊຸດ | 4,799,493 |
| **602-4** | **ການຕິດຕັ້ງປ້າຍຈະລາຈອນປະເພດ 4 ລ່ຽມມົນທົນ** | | |
| 602-4.1 | ການຕິດຕັ້ງປ້າຍຈາລະຈອນ 4 ລ່ຽມມົນທົນ ຊີ້ແຈງ ຂະໜາດ (60 x 60ຊມ) | ຊຸດ | 3,638,006 |
| 602-4.2 | ການຕິດຕັ້ງປ້າຍຈາລະຈອນ 4 ລ່ຽມມົນທົນ ຊີ້ແຈງ ຂະໜາດ (75 x 75ຊມ) | ຊຸດ | 4,218,114 |
| 602-4.3 | ການຕິດຕັ້ງປ້າຍຈາລະຈອນ 4 ລ່ຽມມົນທົນ ຊີ້ແຈງ ຂະໜາດ (90 x 90ຊມ) | ຊຸດ | 4,799,493 |
| **602-5** | **ການຕິດຕັ້ງປ້າຍຈະລາຈອນປະເພດ 4 ລ່ຽມຍາວ** | | |
| 602-5.1 | ການຕິດຕັ້ງປ້າຍຈາລະຈອນ 4 ລ່ຽມຍາວ ແນະນໍາ ຂະໜາດ (60 x 150ຊມ) | ຊຸດ | 9,024,804 |
| 602-5.2 | ການຕິດຕັ້ງປ້າຍຈາລະຈອນ 4 ລ່ຽມຍາວ ແນະນໍາ ຂະໜາດ (200 x 220ຊມ) | ຊຸດ | 16,727,029 |
| 602-5.3 | ການຕິດຕັ້ງປ້າຍຈາລະຈອນ 4 ລ່ຽມຍາວ ແນະນໍາ ຂະໜາດ (200 x 3000ຊມ) | ຊຸດ | 19,000,160 |
| 602-5.4 | ແກ້ວສະທ້ອນແສງ (ຕາແມວ) | ຊຸດ | 489,928 |
| **603** | **ຫຼັກກິໂລແມັດ ແລະ ຫຼັກປະກັນໄພ** | | |
| 603-1 | ຫຼັກກິໂລແມັດ | ຫຼັກ | 1,724,487 |
| 603-2 | ຫຼັກນໍາທາງ ແລະ ປະກັນໄພ | ຫຼັກ | 1,108,577 |
| 603-3 | ຫຼັກຂອບເຂດສະຫງວນທາງ | ຫຼັກ | 1,056,095 |
| 603-4 | ຮາວປ້ອງກັນ | ມ | 1,708,510 |
| **604** | **ລະບົບໄຟເຍືອງທາງ** | | |
| 604-1 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 6 ມ | ຊຸດ | 41,945,418 |
| 604-2 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍຄູ່ສໍາເລັດຄົບຊຸດລວມ ທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 6 ມ | ຊຸດ | 47,945,728 |
| 604-3 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 7 ມ | ຊຸດ | 43,950,107 |
| 604-4 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍຄູ່ສໍາເລັດຄົບຊຸດລວມ ທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 7 ມ | ຊຸດ | 49,943,252 |
| 604-5 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 8 ມ | ຊຸດ | 45,947,918 |
| 604-6 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍຄູ່ສໍາເລັດຄົບຊຸດລວມ ທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 8 ມ | ຊຸດ | 51,941,062 |
| 604-7 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 9 ມ | ຊຸດ | 47,945,728 |
| 604-8 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍຄູ່ສໍາເລັດຄົບຊຸດລວມ ທັງໝໍ້ແປງ, ສາຍໄຟ, ຮາກຖານ ແລະສິ່ງກ່ຽວຂ້ອງທັງໝົດ ລວງສູງ 9 ມ | ຊຸດ | 53,938,872 |
| 604-9 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມສາຍໄຟ+ຕີນເສົາເບຕົງ+ດອກໄຟ+ໝໍ້ໄຟ ແລະ ແຜງ Solar ແລະ ສິ່ງກ່ຽວຂ້ອງທັງໝົດ ລວງສູງ 6 ມ | ຊຸດ | 50,868,370 |
| 604-10 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມສາຍໄຟ+ຕີນເສົາເບຕົງ+ດອກໄຟ+ໝໍ້ໄຟ ແລະ ແຜງ Solar ແລະ ສິ່ງກ່ຽວຂ້ອງທັງໝົດ ລວງສູງ 7 ມ | ຊຸດ | 50,285,652 |
| 604-11 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມສາຍໄຟ+ຕີນເສົາເບຕົງ+ດອກໄຟ+ໝໍ້ໄຟ ແລະ ແຜງ Solar ແລະ ສິ່ງກ່ຽວຂ້ອງທັງໝົດ ລວງສູງ 8 ມ | ຊຸດ | 51,961,126 |
| 604-12 | ຕິດຕັ້ງເສົາໄຟເຍືອງທາງຊະນິດແຂນທ້ອຍດ່ຽວສໍາເລັດຄົບຊຸດ ລວມສາຍໄຟ+ຕີນເສົາເບຕົງ+ດອກໄຟ+ໝໍ້ໄຟ ແລະ ແຜງ Solar ແລະ ສິ່ງກ່ຽວຂ້ອງທັງໝົດ ລວງສູງ 9 ມ | ຊຸດ | 53,938,872 |

## ໝວດທີ 3
## ອົງການ ຄຸ້ມຄອງ ແລະ ກວດກາ

**ມາດຕາ 7 ອົງການຄຸ້ມຄອງ**

ອົງການຄຸ້ມຄອງ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ປະກອບດ້ວຍ:

1. ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ.
2. ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ແຕ່ລະເມືອງ.

**ມາດຕາ 8 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ເປັນຜູ້ຄຸ້ມຄອງວຽກງານລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງໄຊສົມບູນ ໂດຍມອບໃຫ້ ຂະແໜງ ຂົວທາງ ແລະ ທາງນໍ້າ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາວຽກງານດັ່ງກ່າວຕາມຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ແລະ ນໍາພາການຈັດຕັ້ງປະຕິບັດ ລະບຽບການ ແລະ ມາດຕະຖານເຕັກນິກ ການຄິດໄລ່ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ປີ 2024 ໃຫ້ໄດ້ຮັບຜົນດີ;
2. ຄົ້ນຄ້ວາປະກອບຄໍາເຫັນ ຕໍ່ກັບລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ທຸກປະເພດ;
3. ຄຸ້ມຄອງ, ກວດກາ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຕາມຄວາມຮັບຜິດຊອບຂອງຕົນ;
4. ພົວພັນ, ປະສານສົມທົບ ແລະ ຂໍຄໍາຄິດຄໍາເຫັນ ນໍາຂະແໜງການທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງ ແລະ ກວດກາ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການກໍານົດ;
5. ເກັບກໍາ ແລະ ສັງລວມ ຂໍ້ມູນສະຖິຕິ, ຕິດຕາມຊຸກຍູ້, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງ ຂັ້ນເທິງ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ**

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຕາມຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ແລະ ນໍາພາການຈັດຕັ້ງປະຕິບັດ ລະບຽບການ ແລະ ມາດຕະຖານເຕັກນິກ ການຄິດໄລ່ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ໃຫ້ໄດ້ຮັບຜົນດີ;
2. ຄຸ້ມຄອງ, ກວດກາ ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຕາມຄວາມຮັບຜິດຊອບ ຂັ້ນຄຸ້ມຄອງຂອງຕົນ;
3. ພົວພັນ, ປະສານສົມທົບ ແລະ ປະກອບຄໍາຄິດຄໍາເຫັນ ນໍາພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງ ແລະ ກວດກາ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການກໍານົດ;
4. ເກັບກໍາ ແລະ ສັງລວມ ຂໍ້ມູນສະຖິຕິ, ຕິດຕາມຊຸກຍູ້, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 10 ອົງການກວດກາ**

ອົງການກວດກາວຽກງານການກໍານົດລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ປະກອບດ້ວຍ:

1. ອົງການກວດກາພາຍໃນ

ອົງການກວດກາພາຍໃນແມ່ນອົງການດຽວກັບທີ່ໄດ້ກຳນົດຢູ່ໃນມາດຕາ 7 ຂອງຂໍ້ຕົກລົງສະ ບັບນີ້.

2. ອົງການກວດກາພາຍນອກ

ອົງການກວດກາພາຍນອກປະກອບດ້ວຍ: ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ.

**ມາດຕາ 11 ເນື້ອໃນການກວດກາ**

ການກວດກາວຽກລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ແມ່ນການຄວບຄຸມລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ທີ່ຈະນຳໃຊ້ເຂົ້າໃນໂຄງການລົງທຶນຂອງລັດ ຂອງ ຂະແໜງ ໂຍທາທິການ ແລະ ຂົນສົ່ງ ໃນຂອບເຂດທົ່ວແຂວງໄຊສົມບູນ ເທົ່ານັ້ນ ເພື່ອໃຫ້ຖືກຕ້ອງຕາມລະບຽບ ແລະ ກົດໝາຍ.

## ໝວດທີ 4
## ການນຳໃຊ້ ແລະ ການດັດປັບ

**ມາດຕາ 12 ການນຳໃຊ້**

ການນຳໃຊ້ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງ ໂຄງການລົງທຶນຂອງລັດ ພາຍໃນແຂວງໄຊສົມບູນ ແມ່ນເປັນລາຄາພື້ນຖານ ຂອງ ແຂວງໄຊສົມບູນ ເພື່ອເປັນບ່ອນອີງໃນການຂຶ້ນແຜນງົບປະມານເທົ່ານັ້ນ.

ສຳລັບລາຄາຫົວໜ່ວຍ ທີ່ຈະຕ້ອງນຳໃຊ້ເຂົ້າໃນການຄິດໄລ່ມູນຄ່າຂອງໂຄງການໃດໜຶ່ງແມ່ນຈະຕ້ອງໄດ້ມີການຄິດໄລ່ຄືນ ເພື່ອໃຫ້ໄດ້ມູນຄ່າຂອງໂຄງການທີ່ໃກ້ຄຽງກັບສະພາບຕົວຈິງ, ຊຶ່ງອົງການຄຸ້ມຄອງຈັດຕັ້ງປະຕິບັດໂຄງການຈະຕ້ອງໄດ້ເກັບກຳຂໍ້ມູນຕົວຈິງຢູ່ເມືອງ ຫຼື ພື້ນທີ່ ທີ່ໂຄງການຕັ້ງຢູ່ ມາປ້ອນເຂົ້າໃສ່ໂຄງສ້າງສູດຄິດໄລ່ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວທາງ ສະບັບ ຮຽບຮຽງ ປີ 2023 ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ ແລ້ວຈຶ່ງ ຄຳນວນອອກມາເປັນລາຄາຫົວໜ່ວຍຂອງໂຄງການນັ້ນ (ບໍ່ໝາຍຄວາມວ່າຈະເອົາລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງພື້ນຖານ ຂອງ ແຂວງໄຊສົມບູນ ຈາກຂໍ້ຕົກລົງສະບັບນີ້ມາໃສ່ເປັນມູນຄ່າຂອງໂຄງການເລີຍ).

ແຕ່ໃນກໍລະນີທີ່ເປັນໂຄງການເລັ່ງດ່ວນ, ໂຄງການທີ່ມີຂະໜາດນ້ອຍ ຫຼື ໂຄງການໄດ້ຮັບອະນຸ ມັດຈາກຂັ້ນເທິງໃຫ້ນຳໃຊ້ ກໍ່ສາມາດເອົາລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງຂົວທາງ ຂອງແຂວງໄຊສົມບູນ ຈາກຂໍ້ຕົກລົງສະບັບນີ້ໄປນຳໃຊ້ໄດ້ເລີຍ.

**ມາດຕາ 13 ການດັດປັບ**

ສຳລັບມູນຄ່າຂອງໂຄງການກໍ່ສ້າງໃດທີ່ນຳໃຊ້ ລາຄາຫົວໜ່ວຍກິດຈະການກໍ່ສ້າງ ແລະ ສ້ອມ ແປງຂົວທາງ ຂອງ ແຂວງໄຊສົມບູນ ຫຼື ການສົມທຽບໃສ່ ລາຄາຫົວໜ່ວຍ ໃນຂໍ້ຕົກລົງນີ້ ຈະບໍ່ມີການດັດປັບ ເວັ້ນເສຍແຕ່ຈະໄດ້ລະບຸໄວ້ຢູ່ໃນເງື່ອນໄຂຂອງສັນຍາ ແລະ ໃນກໍລະນີທີ່ໂຄງການກຳລັງດຳເນີນການໄປແຕ່ບັງເອີນເກີດມີວິກິດການແບບບໍ່ຄາດຄິດ ຄືຢ່າງ ເຊັ່ນ: ລາຄານ້ຳມັນເພີ່ມສູງຂຶ້ນອັດຕາແລກ ປ່ຽນເພີ່ມສູງຂຶ້ນ, ຄ່າວັດສະດຸກໍ່ສ້າງເພີ່ມສູງຂຶ້ນ, ລາຄາອາໄລ່ເພີ່ມສູງຂຶ້ນ ຫຼາຍເກີນ 15% ແລະ ອັດຕາເງິນເຟີ້ອ ລວມເຖິງຄ່າຄອງຊີບສູງຂຶ້ນຫຼາຍ ຈຶ່ງພິຈາລະນາໃຫ້ມີການດັດປັບ ໂດຍປ້ອນຕົວເລກ (ລາຄາວັດສະດຸ, ຄ່າແຮງງານ ແລະ ອື່ນໆ ທີ່ມີການປ່ຽນແປງໃນຂະນະນັ້ນ) ເຂົ້າໃສ່ໂຄງສ້າງສູດຄິດໄລ່ລາຄາຫົວໜ່ວຍ ກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວທາງ ສະບັບຮຽບຮຽງ ປີ 2023 ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ ແລ້ວຈຶ່ງຄຳນວນອອກມາເປັນລາຄາເພື່ອນຳໃຊ້.

ໃນກໍລະນີດັ່ງກ່າວອາດຈະມີການດັດປັບລາຄາໃໝ່ຕາມສະພາບຕົວຈິງ ໂດຍມີການ ຕົກລົງ ເຫັນດີ ແລະ ໄດ້ຮັບອະນຸມັດຈາກຂັ້ນເທິງ ຈຶ່ງຈະສາມາດດັດປັບ ມູນຄ່າຂອງໂຄງການໄດ້.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 14 ຂໍ້ຫ້າມສໍາລັບພະນັກງານ**

ຫ້າມພະນັກງານລັດຖະກອນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ, ສວຍໂອກາດໃນການຈັດຕັ້ງປະຕິບັດວຽກງານດ້ວຍຄວາມບໍ່ໂປ່ງໃສ;
2. ສວຍໃຊ້ສິດອໍານາດ, ໜ້າທີ່, ຕໍາແໜ່ງ ບັງຄັບ ຫຼື ນາບຂູ່ເພື່ອຫາຜົນປະໂຫຍດສ່ວນຕົວ;
3. ເມີນເສີຍ, ລະເລີຍ ແລະ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ;
4. ປອມແປງເອກະສານ ຫຼື ຂໍ້ມູນທີ່ກ່ຽວຂ້ອງ;
5. ຮັບສິນບົນ ຫຼື ຜົນປະໂຫຍດອື່ນໆໃນການຈັດຕັ້ງປະຕິບັດໜ້າທີ່.

**ມາດຕາ 15 ຂໍ້ຫ້າມສໍາລັບຜູ້ປະກອບການ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ມີພຶດຕິກໍາ ດັ່ງນີ້:

1. ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ;
2. ໃຫ້ສິນບົນແກ່ພະນັກງານຜູ້ປະຕິບັດໜ້າທີ່;
3. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍ ແລະ ມາດຕະການ

**ມາດຕາ 16 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານ ຕາມຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍຢ່າງເໝາະສົມ.

**ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ ຫຼື ບຸກຄົນອື່ນ ຈະຖືກປະຕິບັດຕາມມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໄໝ ຫຼື ຖືກດໍາເນີນຄະດີຕາມລະບຽບກົດໝາຍຕາມກໍລະນີເບົາ ຫຼື ໜັກ ແລະ ໃຊ້ແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ທຸກພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ ຈົນກ່ວາ ກະຊວງໂຍທາທິການ ແລະ ຂົນສົ່ງ ຈະມີການປັບປຸງ ໂຄງປະກອບສູດຄິດໄລ່ລາຄາຫົວໜ່ວຍໃໝ່ ຫຼື ລາຄາວັດສະດຸມີການປ່ຽນແປງ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນໍາໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

**ເຈົ້າແຂວງໄຊສົມບູນ**

ພອຍຄໍາ ຮຸ່ງບຸນຍວງ